守谷市国際交流協会
Moriya International Friendship Association

# ສະມາຄົມມິດຕະພາບລະວ່າງປະເທດເມືອງໂມລິຍະ

ສະມາຄົມມິດຕະພາບລະວ່າງປະເທດເມືອງໂມລິຍະ(MIFA)ຖືກຕັ້ງຂຶ້ນໃນປີ 1989 ດ້ວຍເປົ້າໝາຍເພື່ອສົ່ງເສີມການພົວພັນຕ່າງປະເທດແລະ ໃຫ້ເປັນປະໂຫຍດຕໍ່ມິດຕະພາບລະຫວ່າງປະເທດ .
ໃນປີ 2008 ສະມາຄົມຖືກຕັ້ງຂຶ້ນຄົບຮອບ 20 ປີ .
ມີສະມາຊິກປະມານ 400 ຄົນ ແລະກໍມີ ປະຊາຊົນຈຳນວນຫຼວງຫຼາຍເຄື່ອນໄຫວໃນນາມເປັນອາສາສະໝັກ .
ສະມາຄົມໄດ້ສືບຕໍ່ເຮັດການເຄື່ອນໄຫວພົວພັນຕ່າງປະເທດຊະນິດຕ່າງໆເຊັ່ນເປີດຫ້ອງສອນພາສາຍີ່ປຸ່ນໃຫ້ຄົນຕ່າງປະເທດ, ຈັດໂຮມສະເຕ ໃຫ້ນັກຮຽນຕ່າງປະເທດເປັນຕົ້ນ .ໃນປີ 2006, ການເຄື່ອນໄຫວນັ້ນ ຖືກປະເມີນວ່າມີຄຸນຄ່າສູງ, ໄດ້ຮັບການຍ້ອງຍໍຈາກ ປະທານຂອງອົງການ JICA ແລະອື່ນໆ .





## ສາຍພົວພັນລະວ່າງ MIFAແລະປະເທດລາວ

ໃນນາມການເຄື່ອນໄຫວພົວພັນຕ່າງປະເທດ, ພິເສດແມ່ນມີສາຍພົວພັນກັບປະເທດລາວຢ່າງໜັກແໜ້ນ.ໃນລາຍການສະຫຼອງຄົບຮອບ 20 ປີໃນ 2008 ໄດ້ເຊື້ອເຊີນນັກຮຽນມັດທະຍົມປາຍມາແຕ່ປະເທດລາວເພື່ອສະແດງສິນລະປະການຟ້ອນປະຈຳຊາດແລະຫຼິ້ນລະຄອນຕຸກກະຕາໃຫ້ຊົມ ຊຶ່ງເຮັດໃຫ້ມິດຕະພາບລະຫວ່າງທັງສອງປະເທດນັ້ນຍິ່ງມີຄວາມແໜ້ນແຟ້ນຂຶ້ນ .





ມິດຕະພາບກັບປະເທດລາວໄດ້ເລີ່ມຂຶ້ນຈາກການໄປທັດສະນະສຶກສາປະເທດລາວໃນປີ 1999 . ໃນການໄປທັດສະນະເທື່ອທໍາອິດ, ໄດ້ໄປທັດສະນະສູນບໍາບັດນໍ້າເສຍຈິນາຍໂມ້, ໂຮງໝໍແຫ່ງຊາດລາວແລະໂຮງຮຽນມັດທະຍົມຕອນຕົ້ນແລະອື່ນໆ ທີ່ສ້າງຂຶ້ນດ້ວຍເງິນຊ່ວຍເຫຼືອລ້າຂອງລັດຖະບານຍີ່ປຸ່ນ . ພວກເຮົາມີຄວາມປະທັບໃຈຕໍ່ການມີມາລະຍາດດີແລະຄວາມອຸດົມສົມບູນທາງດ້ານຈິດໃຈຂອງຄົນລາວ. ນັກຮຽນໂຮງຮຽນມັດທະຍົມຕອນຕົ້ນທີ່ໄປຢ້ຽມນັ້ນ ມີຕາທີ່ ເຫຼື້ອມແວວວາວ ແລະກໍເຕັມໄປດ້ວຍຄວາມຊື່ນຊົມຕໍ່ການຮຽນ .
ຍ້ອນຄວາມເຫັນອົກເຫັນໃຈຈຶ່ງໝັ້ນໃຈວ່າຈະສາມາດພົວພັນກັບປະເທດລາວນີ້ຢ່າງຍາວນານໄດ້ .

ຫຼັງຈາກນັ້ນ, ໃນປີ 2001 ກໍໄດ້ເຊີນນັກຮຽນ 10 ຄົນຈາກສູນວັດທະນະທໍາເດັກນ້ອຍ(CCC)ຂອງຫຼວງພະບາງເຊິ່ງເປັນເມືອງໃຫຍ່ລະດັບທີ່ 2 ຂອງລາວມາຢ້ຽມຢາມເມືອງໂມລິຢະ ແລ້ວຈັດງານ * ລາວໃນໂມລິຢະ *.
ແຕ່ປີ 2001 ຫາປີ 2005 ໃນໄລຍະ 3 ປີ, ໄດ້ຮັບ ຄູຈາກຫຼວງພະບາງ 6 ຄົນມາຝຶກອົບຮົມ ກ່ຽວກັບເນື້ອໃນການສຶກສາຂອງໂຮງຮຽນຍີ່ປຸ່ນໃນໂຄງການຮ່ວມມືແບບຮາກຫຍ້າຂອງ JICA .
ໃນປີ 2004 ໄດ້ເຊື້ອເຊີນທີ່ປຶກສາທູດ ສປປ ລາວມາປະຖະກະຖາຢູ່ MIFA .

ນອກຈາກນັ້ນ, ໃນປີ 2002, 2005, 2007, MIFA ໄດ້ຈັດການໄປທັດສະນະສຶກສາປະເທດລາວ . ໃນປີ2008 ໃນນາມໂຄງການແລກປ່ຽນເຍົາວະຊົນຊາວໜຸ່ມ ໄດ້ເຊື້ອເຊີນທ່ານໝໍ , ພະຍາບານແລະອື່ນ 13 ທ່ານມາເພື່ອໃຫ້ເຂົ້າໃຈກ່ຽວກັບການປິ່ນປົວ,ລະບົບການພະຍາບານແລະສະໜາມການປິ່ນປົວແລະພະຍາບານຂອງຍີ່ປຸ່ນ.

ຮູບ





ໃນໄລຍະ 9 ປີ, ມີການໄປມາຫາສູ່ກັນ 10 ເທື່ອ ແລະກໍມີການແລກປ່ຽນກັນເປັນຈໍານວນຫຼາຍຄົນ . MIFA ແລະປະເທດລາວມີສາຍພົວພັນກັນຢ່າງໜຽວແໜ້ນ. ຕໍ່ນີ້ໄປ ກໍຫວັງວ່າ ສາຍພົວພັນນີ້ຈະສືບຕໍ່ໄປຊົ່ວນິລັນ.

MIFA
ສະມາຄົມມິດຕະພາບລະວ່າງປະເທດເມືອງໂມລິຢະ
Ibaragi –Ken , Moriya-Shi , Okashiwa 950-1
TEL：０２９７－４５－１１１
e-mail: mifa@fureai.or.jp